ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------

ນາຍົກລັດຖະມົນຕີ

ເລກທີ 13 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 11. 6. 2012.

# ຄຳສັ່ງ

## ວ່າດ້ວຍການໂຈະການພິຈາລະນາ ແລະ ອະນຸຍາດໂຄງການລົງທຶນໃໝ່ ສຳລັບການຊອກຄົ້ນ ແລະ ສຳຫຼວດແຮ່ທາດ, ການປູກຢາງພາລາ ແລະ ໄມ້ວິກ ໃນຂອບເຂດທົ່ວປະເທດ

ເຖິງ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງໃນທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003 ;
- ອີງຕາມກົດໝາຍວ່າດ່ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011 ;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009 ;
- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 ;
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007 ;
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 02/99/ສພຊ, ລົງວັນທີ 03 ເມສາ 1999 ;
- ອີງຕາມມະຕິຂອງກອງປະຊຸມສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນທົ່ວປະເທດ ຄັ້ງທີ II, ໃນວັນທີ 07-08 ພຶດສະພາ 2012 ແລະ ເອກະສານສະເໜີຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1365/ຜທ.ລທ.4, ລົງວັນທີ 25 ພຶດສະພາ 2012.

ໃນໄລຍະຜ່ານມາລັດຖະບານ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນ ໄດ້ອະນຸຍາດໃຫ້ບໍລິສັດເອກະຊົນພາຍໃນ ແລະ ຕ່າງປະເທດ ລົງທຶນ ແລະ ດຳເນີນກິດຈະການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ທາດຕ່າງໆ, ລວມທັງການຂຸດຄົ້ນແຮ່ຄຳຕົກຂ້ອນ ຕາມຫ້ວຍນ້ຳລຳເຊເປັນຈຳນວນຫຼາຍພໍສົມຄວນ ເຊິ່ງກວມເນື້ອທີ່ເຖິງ 23,13% ຂອງເນື້ອທີ່ທົ່ວປະເທດ, ເຊິ່ງໄດ້ປະກອບສ່ວນແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ການສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ແກ່ປະຊາຊົນ. ໃນຂະນະດຽວກັນ, ການອະນຸຍາດໂຄງການລົງທຶນໃນກິດຈະການບໍ່ແຮ່ຜ່ານມາ ຍັງປະກົດເຫັນວ່າ ການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນມີປະສິດທິຜົນສູງ ແລະ ໄດ້ສ້າງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຢ່າງຮ້າຍແຮງ.

ພ້ອມດຽວກັນນັ້ນ, ຜ່ານມາໄດ້ມີການອະນຸຍາດໃຫ້ບໍລິສັດເອກະຊົນພາຍໃນ ແລະ ຕ່າງປະເທດ ສຳປະທານທີ່ດິນຢ່າງກວ້າງຂວາງໃນການປູກຢາງພາລາ ແລະ ໄມ້ວິກ ເຊິ່ງບໍລິສັດຈຳນວນໜຶ່ງໄດ້ປະກອບສ່ວນພັດທະນາຊົນນະບົດແກ້ໄຂວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ປະຊາຊົນໃນເຂດທີ່ຕັ້ງຂອງໂຄງການຢ່າງຕັ້ງໜ້າ, ແຕ່ເຖິງຢ່າງໃດກໍດີ ມາຮອດປະຈຸບັນ ຄວາມສາມາດໃນການຕອບສະໜອງເນື້ອທີ່ດິນ ແລະ ແຮງງານບໍ່ພຽງພໍ ແລະ ຍັງບໍ່ທັນສຳເລັດການສຳຫຼວດ ແລະ ຈັດສັນເນື້ອທີ່ການນຳໃຊ້ທີ່ດິນຢ່າງລະອຽດເທື່ອ.

ເພື່ອຮັບປະກັນການພັດທະນາແບບຍືນຍົງ, ການນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນສູງ ແລະ ຍືນຍົງ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການສົ່ງເສີມກະສິກຳສະອາດທີ່ຍືນຍົງ, ສອດຄ່ອງກັບທິດທາງຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ.

ນາຍົກລັດຖະມົນຕີ ອອກຄຳສັ່ງ :

I. <u>ກ່ຽວກັບກິດຈະການບໍ່ແຮ່ :</u>

1. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ແຂວງ ແລະ ນະຄອນຫຼວງວຽງຈັນ ໂຈະການພິຈາລະນາ ແລະ ອະນຸຍາດໂຄງການລົງທຶນໃໝ່ ສຳລັບການຂຸດຄົ້ນ ແລະ ສຳຫຼວດແຮ່ທາດໂລຫະ ແລະ ອະໂລຫະ ເຊັ່ນ : ຄຳຂາວ (Pt), ຄຳ (Au), ເງິນ (Ag), ທອງ (Cu), ເຫຼັກ (Fe), ຊືນ (Pb), ສັງກະສີ (Zn), ອາລູມີນຽມ (Al), ກົ່ວ (Sn), ອັງຕີມອນ (Sb), ເບລຽມ (Ba), ນິແກນ (Ni), ໂຄບານ (Co), ແກ້ວປະເສີດ, ເກືອກາລີ, ເກືອມາເຍຊຽມ ແລະ ຫີນກາວ ລວມທັງການຂຸດຄົ້ນແຮ່ຄຳຕົກຂ້ອນຢູ່ເທິງໜ້າດິນ ແລະ ຕາມຫ້ວຍນ້ຳລຳເຊ ໃນຂອບເຂດທົ່ວປະເທດ ເລີ່ມແຕ່ວັນທີ່ຄຳສັ່ງສະບັບນີ້ມີຜົນສັກສິດ ຈົນເຖິງ ວັນທີ 31 ທັນວາ 2015 ເພື່ອດຳເນີນການກວດກາປະເມີນຜົນຄືນການຈັດຕັ້ງປະຕິບັດຕົວຈິງ ແລະ ຊຸກຍູ້ບັນດາໂຄງການທີ່ໄດ້ອະນຸຍາດຈາກລັດຖະບານແລ້ວ ໃຫ້ດຳເນີນຕາມຂັ້ນຕອນທີ່ກຳນົດໄວ້ໃນສັນຍາ ແລະ ກົດໝາຍຢ່າງເຂັ້ມງວດ. ສຳລັບກໍລະນີພິເສດ ທີ່ພົວພັນກັບບັນຫາຍຸດທະສາດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ລັດຖະບານຈະເປັນຜູ້ພິຈາລະນາເປັນແຕ່ລະກໍລະນີຢ່າງຮອບຄອບ.

   ສ່ວນການລົງທຶນເພື່ອຂໍອະນຸຍາດຂຸດຄົ້ນ ແລະ ສຳຫຼວດແຮ່ທາດອື່ນ ທີ່ຈຳເປັນເພື່ອນຳໃຊ້ເຂົ້າໃນການຜະລິດຝຸ່ນຊີວະພາບ, ຮັບໃຊ້ໃນອຸດສາຫະກຳພາຍໃນປະເທດ ຫຼື ເພື່ອຮັບໃຊ້ການກໍ່ສ້າງໂຮງງານທີ່ໄດ້ຮັບອະນຸຍາດ ເຊັ່ນ : ໂຮງງານໄຟຟ້າພະລັງງານຄວາມຮ້ອນ, ໂຮງງານຊີມັງ ຄື : ຖ່ານຫີນ, ຫີນປູນ, ດິນໜຽວ, ຫີນດິບ ແລະ ຫີນປະດັບ ແມ່ນໃຫ້ສືບຕໍ່ພິຈາລະນາຕາມລະບຽບກົດໝາຍ, ແຕ່ການພິຈາລະນາຕ້ອງຮອບຄອບ ແລະ ບົນພື້ນຖານຄວາມຈຳເປັນຂອງການຂະຫຍາຍຕົວທາງດ້ານອຸດສາຫະກຳພາຍໃນປະເທດ.

   - ສຳລັບຄຳຮ້ອງຂໍລົງທຶນສຳປະທານກິດຈະການແຮ່ທາດ ທີ່ຍື່ນກ່ອນວັນທີ່ຄຳສັ່ງສະບັບນີ້ມີຜົນສັກສິດ ກໍໃຫ້ໂຈະການຄົ້ນຄ້ວາພິຈາລະນາ, ຍົກເວັ້ນໂຄງການທີ່ໄດ້ມີການຕົກລົງເຫັນດີຈາກລັດຖະບານ ຢ່າງເປັນລາຍລັກອັກສອນແລ້ວ.

2. ຫ້າມສົ່ງອອກແຮ່ທາດທີ່ບໍ່ທັນໄດ້ຜ່ານການປຸງແຕ່ງ (ແຮ່ດິບ) ອອກໄປຕ່າງປະເທດຢ່າງເດັດຂາດ, ແຕ່ສາມາດນຳເຂົ້າແຮ່ທາດຈາກຕ່າງປະເທດໄດ້, ຍົກເວັ້ນແຮ່ທາດເກືອດຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍ.

3. ໃຫ້ຈັດຕັ້ງຄະນະສະເພາະກິດ ຊຶ່ງປະກອບດ້ວຍ: ຂະແໜງແຜນການ ແລະ ການລົງທຶນ ເປັນຫົວໜ້າຄະນະ, ຂະແໜງພະລັງງານ ແລະ ບໍ່ແຮ່ ເປັນຮອງຫົວໜ້າຄະນະ, ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງ ການເງິນ ແລະ ອົງການປົກຄອງທ້ອງຖິ່ນ ເປັນກຳມະການ ເພື່ອດຳເນີນການກວດກາ ແລະ ປະເມີນຜົນວຽກງານດັ່ງກ່າວ ລວມທັງບັນດາໂຄງການລົງທຶນໃນການຂຸດຄົ້ນ (ດູດ) ແຮ່ຫີນ, ດິນຊາຍ ແລະ ແຮ່ຕິດພັນຕາມລຳນ້ຳ ພ້ອມທັງຫີນ (ລວມທັງ ຫີນພູ, ຫີນຜາ) ເພື່ອຮັບໃຊ້ການກໍ່ສ້າງທີ່ແຂວງໄດ້ອອກອະນຸຍາດ ແລ້ວຕີລາຄາປະເມີນຜົນການລົງທຶນດັ່ງກ່າວ ແລະ ສະຫຼຸບລາຍງານໃຫ້ລັດຖະບານຊາບ. ສ່ວນງົບປະມານເຄື່ອນໄຫວຂອງຄະນະດັ່ງກ່າວ ແມ່ນໃຫ້ນຳໃຊ້ເງິນຄຸ້ມຄອງໂຄງການສຳປະທານແຮ່ທາດ.

II. <u>ກ່ຽວກັບໂຄງການປູກຢາງພາລາ ແລະ ໄມ້ວິກ :</u>

1. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ແຂວງ ແລະ ນະຄອນຫຼວງວຽງຈັນ ໂຈະການພິຈາລະນາ ແລະ ອະນຸຍາດໂຄງການລົງທຶນໃໝ່ ສຳລັບໂຄງການປູກຢາງພາລາ ແລະ ໄມ້ວິກ ໃນຂອບເຂດທົ່ວປະເທດ ເລີ່ມແຕ່ວັນທີ່ຄຳສັ່ງສະບັບນີ້ມີຜົນສັກສິດ ຈົນເຖິງວັນທີ 31 ທັນວາ 2015 ເພື່ອດຳເນີນການກວດກາ ປະເມີນຜົນຄືນກ່ຽວກັບບັນດາໂຄງການປູກຢາງພາລາ ແລະ ໄມ້ວິກ ທີ່ໄດ້ອະນຸມັດໄປແລ້ວ ແລະ ກວດກາການປະຕິບັດພັນທະຕ່າງໆຕາມສັນຍາ ແລະ ລະບຽບກົດໝາຍ.

    - ສຳລັບຄຳຮ້ອງຂໍລົງທຶນສຳປະທານກິດຈະການປູກໄມ້ວິກ ແລະ ຢາງພາລາ ທີ່ຍື່ນກ່ອນວັນທີ່ຄຳສັ່ງສະບັບນີ້ມີຜົນສັກສິດ ກໍໃຫ້ໂຈະການຄົ້ນຄ້ວາພິຈາລະນາ, ຍົກເວັ້ນໂຄງການທີ່ໄດ້ມີການຕົກລົງເຫັນດີຈາກລັດຖະບານ ຢ່າງເປັນລາຍລັກອັກສອນແລ້ວ.

    - ການລົງທຶນໃນຂະແໜງກະສິກຳ ໃຫ້ຫັນທິດໄປໃສ່ການຜະລິດກະສິກຳສະອາດທີ່ຍືນຍົງ ພ້ອມທັງສົ່ງເສີມການປຸງແຕ່ງພາຍໃນໃຫ້ຫຼາຍຂຶ້ນ.

2. ໃຫ້ຈັດຕັ້ງຄະນະສະເພາະກິດ ຊຶ່ງປະກອບດ້ວຍ : ຂະແໜງແຜນການ ແລະ ການລົງທຶນ ເປັນຫົວໜ້າຄະນະ, ຂະແໜງກະສິກຳ ແລະ ປ່າໄມ້ ເປັນຮອງຄະນະ, ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການເງິນ ແລະ ອົງການປົກຄອງທ້ອງຖິ່ນ ເປັນກຳມະການ ເພື່ອດຳເນີນການກວດກາ ແລະ ປະເມີນຜົນວຽກງານດັ່ງກ່າວ ແລ້ວລາຍງານໃຫ້ລັດຖະບານຊາບ. ສ່ວນງົບປະມານເຄື່ອນໄຫວຂອງຄະນະດັ່ງກ່າວ ແມ່ນໃຫ້ນຳໃຊ້ເງິນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ.

3. ໃຫ້ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງ ກະສິກຳ ແລະ ປ່າໄມ້ ສຸມໃສ່ດຳເນີນວຽກງານສຳຫຼວດ ແລະ ຈັດສັນທີ່ດິນໃນຂອບເຂດທົ່ວປະເທດ ຕາມພາລະບົດບາດຂອງຂະແໜງການຕົນ ໃຫ້ສຳເລັດໄວ.

4. ພາຍຫຼັງສຳເລັດການກວດກາ ແລະ ຕີລາຄາຜົນໄດ້ຮັບຈາກການລົງທຶນໃນຂະແໜງການດັ່ງກ່າວນີ້ແລ້ວ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງກະສິກຳ ແລະ ປ່າໄມ້ ສ້າງແຜນຍຸດທະສາດໃນການສົ່ງເສີມການລົງທຶນໃນຂະແໜງຂອງຕົນໃນຕໍ່ໜ້າ ເພື່ອສະເໜີລັດຖະບານພິຈາລະນາຮັບຮອງເອົາກ່ອນປີ 2015.

5. ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກຳ ແລະ ປ່າໄມ້ ອອກບົດແນະນຳລະອຽດຕື່ມໃນການປະຕິບັດຕົວຈິງ, ໂດຍອີງໃສ່ເນື້ອໃນຈິດໃຈ ຂອງຄຳສັ່ງສະບັບນີ້.

6. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ ຈົ່ງຮັບຮູ້ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຕາມຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.
7. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຄຳສັ່ງປ່ຽນແປງໃໝ່.

ນາຍົກລັດຖະມົນຕີ

ທອງລຶງ ທຳມະວົງ